# ບົດລາຍງານ SIREN

STRATEGIC INFORMATION RESPONSE NETWORK

(ຍຸດທະສາດການຕອບໂຕ້ດ້ວຍເຄືອຂ່າຍ ຂໍ້ມູນຂ່າວສານ)

ໂຄງການເຄືອຂ່າຍຕ້ານການຄ້າມະນຸດ ຂອງອົງການສະຫະປະຊາຊາດ ໄລຍະ III

**ບາງກອກ, ປະເທດໄທ**

28 ສິງຫາ 2009 GMS-07

# ທົບທວນໂຄງການກັບຄືນເຂົ້າສູ່ສັງຄົມ

## ຜູ້ເຄາະຮ້າຍທີ່ກັບຄືນບ້ານຕ້ອງການຫຍັງແທ້? ຫຼັກຖານຈາກປະເທດໄທ ແລະ ຟີລິບປິນ

| | |
|---|---|
| **ຄໍາສັບສໍາຄັນ** | ▪ ຫົວຂໍ້: ການປົກປ້ອງຜູ້ເຄາະຮ້າຍ; ການກັບຄືນເຂົ້າສູ່ສັງຄົມ<br>▪ ປະເພດຂໍ້ມູນ: ບົດຮຽນທີ່ຖອດຖອນໄດ້ຈາກໂຄງການ ການກັບຄືນເຂົ້າສູ່ສັງຄົມໃນອາຊີ, ໂດຍສະເພາະແມ່ນການສໍາພາດແບບເຈາະເລິກກັບຜູ້ເຄາະຮ້າຍຄົນໄທ ແລະ ຟີລິບປິນ ທີ່ກັບຄືນບ້ານຈາກການຄ້າມະນຸດຈາກໃນ ແລະ ນອກອາຊີ; n=59 |
| **ເລື່ອງໂດຍຫຍໍ້** | *ຜູ້ເຄາະຮ້າຍຈາກການຄ້າມະນຸດຄົນໄທ ແລະ ຟີລິບປິນທີ່ກັບຄືນບ້ານດ້ວຍຕົນເອງ ແລະ ໂດຍໄດ້ຮັບການຊ່ວຍເຫຼືອ ສະໜອງຂໍ້ມູນລະອຽດ ກ່ຽວກັບຄວາມຕ້ອງການອັນຈໍາເປັນ, ບັນຫາທ້າທາຍ ແລະ ຄວາມປາຖະໜາ ຢ່າງແທ້ຈິງຂອງເຂົາເຈົ້າ; ແລະ ເຜີຍໃຫ້ເຫັນວ່າ ຄວາມຊ່ວຍເຫຼືອໃນການກັບຄືນເຂົ້າສູ່ສັງຄົມທີ່ເຂົາເຈົ້າໄດ້ຮັບ ໄດ້ຊ່ວຍ ແລະ ເປັນອຸປະສັກຕໍ່ການຟື້ນຄືນສູ່ສະພາບປົກກະຕິ ຂອງເຂົາເຈົ້າແນວໃດ.* |
| **ຜູ້ຂຽນ** | *ທ່ານ ແອນເດີສ ລິດສບອກ, ອີງໃສ່ບົດລາຍງານການຄົ້ນຄວ້າຂອງອົງການແຮງງານສາກົນ (ILO) ທີ່ຈະເຜີຍແຜ່ໃນປີ 2009 ກ່ຽວກັບໂຄງການ ການກັບຄືນເຂົ້າສູ່ສັງຄົມໃນອາຊີ. [ຕິດຕໍ່: alisborg@gmail.com]* |

*ໃນຊຸມປີທີ່ຜ່ານມາບໍ່ດົນນີ້ ໂຄງການປົກປ້ອງ ແລະ ສະຖາບັນ ຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ການຄ້າມະນຸດໃນທົ່ວໂລກ ໄດ້ມີຈໍານວນເພີ່ມຂຶ້ນ. ເຖິງຢ່າງໃດກໍຕາມ, ການເພີ່ມຂຶ້ນດັ່ງກ່າວ ບໍ່ໄດ້ໝາຍເຖິງການເບິ່ງແຍງ ແລະ ການບໍລິ ການທີ່ມີຄຸນນະພາບດີຂຶ້ນສະເໝີໄປ, ໂດຍສະ ເພາະແມ່ນໃນຂົງເຂດ ຂອງການກັບຄືນເຂົ້າສູ່ສັງຄົມໄລຍະຍາວ ໂດຍອີງໃສ່ຊຸມຊົນເປັນພື້ນຖານ ແລະ ການດໍາລົງຊີວິດທີ່ມີທາງເລືອກ ຢ່າງແທ້ຈິງ.*

*ໃນບາງກໍລະນີ, ໂຄງການ ການກັບຄືນເຂົ້າສູ່ສັງຄົມໄດ້ສ້າງຜົນກະທົບທີ່ດີໃນລະດັບຈໍາກັດ ຫຼື ບໍ່ມີເລີຍຕໍ່ຜູ້ເຄາະຮ້າຍທີ່ກັບຄືນບ້ານ; ໃນກໍລະນີທີ່ຮ້າຍແຮງທີ່ສຸດການຊ່ວຍເຫຼືອທີ່ບໍ່ມີການອອກແບບ ຫຼື ວາງແຜນທີ່ດີ ໄດ້ສ້າງຄວາມ ເສຍຫາຍຫຼາຍກວ່າ ຊ່ວຍ*

ເຫຼືອຜູ້ເຄາະຮ້າຍ ທີ່ກັບຄືນບ້ານ. ໄດ້ມີການບັນທຶກກໍລະນີຕ່າງໆ ທີ່ຜູ້ເຄາະຮ້າຍກັບຄືນບ້ານໄດ້ຖືກຈຳກັດສະຖານທີ່ຢ່າງເຄັ່ງຄັດ ເຊິ່ງເປັນການຈຳກັດໂອກະລາດ ແລະ ອິດສະຫຼະພາບຂອງເຂົາເຈົ້າຫຼາຍກວ່າການຊ່ວຍໃຫ້ດີຂຶ້ນ. ມີບາງກໍລະນີທີ່ມີການລົງໂທດທາງດ້ານຮ່າງກາຍ ແລະ ຈິດໃຈ ເພື່ອໃສ່ລະບຽບຜູ້ທີ່ກັບຄືນບ້ານ, ແລະ ມີຫຼາຍຕົວຢ່າງທີ່ສະແດງໃຫ້ເຫັນວ່າການສະໜອງການສຶກສາ ຫຼື ຝຶກອົບຮົມບໍ່ພຽງພໍ ເຊິ່ງເປັນການເສຍເວລາ ສຳລັບຜູ້ທີ່ກັບຄືນບ້ານ ຫຼາຍກວ່າຈະນຳໄປສູ່ອາຊີບທີ່ດີ ແລະ ການດຳລົງຊີວິດທີ່ຍືນຍົງ.[1] ຫຼັງຈາກການຈັດຕັ້ງປະຕິບັດໂຄງການ ຊ່ວຍເຫຼືອຜູ້ເຄາະຮ້າຍ ໃນເວລາກັບຄືນບ້ານ ເປັນເວລາຫຼາຍປີ, ເຖິງເວລາແລ້ວທີ່ຈະຕ້ອງມີການປະເມີນ ສິ່ງໃດທີ່ເປັນຜົນສຳເລັດ, ສິ່ງໃດທີ່ບໍ່ໄດ້ຮັບຜົນ ແລະ ແຜນການຕໍ່ໜ້າ ໃນການ ສະໜອງການສະໜັບສະໜູນທີ່ມີປະສິດທິຜົນ.

ບົດລາຍງານສະບັບນີ້ ສະຫຼຸບບົດຮຽນທີ່ຖອດຖອນໄດ້ ຈາກໂຄງການກັບຄືນເຂົ້າສູ່ສັງຄົມ ໃນອາຊີ, ໂດຍສະເພາະແມ່ນຜົນຂອງການຄົ້ນຄວ້າ ທີ່ຜ່ານມາບໍ່ດົນນີ້ ກ່ຽວກັບການສຳພາດຂໍ້ມູນຄຸນນະພາບແບບເຈາະເລິກກັບຜູ້ເຄາະຮ້າຍ ທີ່ກັບຄືນບ້ານຈາກການຄ້າປະເວນີ ແລະ ການຄ້າແຮງງານ ໃນປະເທດໄທ ແລະ ຟີລິບປິນ ຈຳນວນ 59 ຄົນ.[2]

ລາຍລະອຽດເລິກເຊິ່ງ ຈາກຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບຄືນບ້ານ ກ່ຽວກັບປະສົບການ, ການສະທ້ອນຄືນ ກ່ຽວກັບຄວາມຊ່ວຍເຫຼືອໃນການກັບຄືນເຂົ້າສູ່ສັງຄົມ ທີ່ເຂົາເຈົ້າໄດ້ຮັບ, ຄວາມເປັນຫ່ວງຕົ້ນຕໍ ແລະ ຄວາມຕ້ອງການອັນຈຳເປັນຂອງເຂົາເຈົ້າ ໃນເວລາກັບຄືນບ້ານ, ແລະ ຂໍ້ແນະນຳສຳລັບການປັບປຸງຄຸນນະພາບ ແລະ ປະສິດທິພາບ ຂອງການຊ່ວຍເຫຼືອໃນການກັບຄືນເຂົ້າສູ່ສັງຄົມ[3] ພ້ອມທັງເຜີຍໃຫ້ເຫັນບົດຮຽນທີ່ຖອດຖອນໄດ້ 5 ຂໍ້. ທັງໝົດນີ້ ແມ່ນຂຶ້ນກັບຫຼັກປັດຊະຍາ ໃນການສ້າງຄວາມສາມາດໃຫ້ແກ່ຜູ້ເຄາະຮ້າຍ ເພື່ອໃຫ້ສາມາດມີທາງເລືອກທີ່ມີຂໍ້ມູນພຽງພໍ ແລະ ມີຄວາມເປັນໄປໄດ້ໃນດ້ານເສດຖະກິດ ເມື່ອເຂົາເຈົ້າມີ ຄວາມພ້ອມ, ລວມທັງຜູ້ເຄາະຮ້າຍ ທີ່ບໍ່ໄດ້ຖືກ ລະບຸຢ່າງຖືກຕ້ອງຜ່ານມາ. ໂດຍໃນຕົວແລ້ວ, ການສ້າງຄວາມສາມາດ ແລະ ການເລືອກທີ່ມີຂໍ້ມູນພຽງພໍນັ້ນ ແມ່ນເຫັນວ່າເປັນບາດກ້າວທຳອິດທີ່ຈຳເປັນສຳລັບຜູ້ເຄາະຮ້າຍເພື່ອໃຫ້ສາມາດຍາດໄດ້ ການຈັດການຊີວິດຂອງຕົນເອງຄືນມາ.

[1] ILO (2006). ມາດຕະຖານ ເພື່ອນເດັກ *& ຄູ່ມືສຳລັບ ການຟື້ນຄືນສູ່ສະພາບປົກກະຕິ ແລະ ການກັບຄືນເຂົ້າສູ່ສັງຄົມ ຂອງເດັກນ້ອຍທີ່ຖືກຄ້າມະນຸດ.*

[2] ILO (2009). *ກັບເມືອບ້ານ – ດຳເນີນຊີວິດຕໍ່ໄປ. ການສຶກສາ ກ່ຽວກັບທ່າອ່ຽງ ແລະ ປະສົບການຂອງຜູ້ເຄາະຮ້າຍ ຈາກການຄ້າມະນຸດ ໃນປະເທດໄທ ແລະ ຟີລິບປິນ.* (ການລາຍງານທີ່ຈະອອກເຜີຍແຜ່ໃນມໍ່ໆນີ້).

[3] ເນື່ອງຈາກວ່າການຄົ້ນຄວ້າແນໃສ່ການຊ່ວຍເຫຼືອໄວໜຸ່ມ ແລະ ຜູ້ໃຫຍ່ທີ່ກັບຄືນບ້ານເປັນຕົ້ນຕໍ, ທັດສະນະສະເພາະຂອງເດັກນ້ອຍຕໍ່ການຟື້ນຄືນສູ່ສະພາບປົກກະຕິ ແລະ ການກັບຄືນເຂົ້າສູ່ສັງຄົມ ບໍ່ໄດ້ຖືກກວມເອົາໃນບົດລາຍງານສະບັບນີ້.

***ນິຍາມການກັບຄືນເຂົ້າສູ່ສັງຄົມ.*** *ການຄ້າມະນຸດສາມາດເປັນຜົນມາຈາກຂະບວນການ ການເຄື່ອນຍ້າຍຖິ່ນຖານ ເຊິ່ງຜູ້ທີ່ເຄື່ອນຍ້າຍສູນເສຍເອກະລາດ ແລະ ການຈັດການ ສະຖານະພາບຂອງຕົນເອງ ແລະ ໃນທີ່ສຸດກໍຖືກເອົາປຽບ. ດັ່ງນັ້ນ, ການກັບຄືນເຂົ້າສູ່ສັງຄົມຄວນກ່ຽວກັບການຮັບປະກັນວ່າຜູ້ເຄາະຮ້າຍຈາກການຄ້າມະນຸດ ໄດ້ເອກະລາດ ແລະ ການຈັດການຊີວິດຂອງເຂົາເຈົ້າຄືນມາ. ມັນບໍ່ແມ່ນພຽງແຕ່ການກັບມາເຮືອນຊານ ແຕ່ແມ່ນການສ້າງຄວາມສາມາດທາງດ້ານສັງຄົມ ແລະ ເສດຖະກິດ ເພື່ອໃຫ້ເຂົາເຈົ້າມີຂໍ້ມູນພຽງພໍ ໃນການຕັດສິນໃຈໄດ້ດີຂຶ້ນ, ກາຍເປັນສະມາຊິກສັງຄົມທີ່ມີສຸຂະພາບແຂງແຮງ ແລະ ມີກຳລັງຜະລິດ ບໍ່ວ່າຈະຢູ່ໃສກໍຕາມ. ໃນຫຼາຍກໍລະນີ, ການກັບຄືນເຂົ້າສູ່ສັງຄົມ ໝາຍເຖິງການທີ່ຜູ້ເຄາະຮ້າຍກັບຄືນສູ່ຄອບຄົວ ແລະ ແຫຼ່ງກຳເນີດ, ແຕ່ກໍອາດຈະລວມທັງການປັບໂຕເຂົ້າສູ່ຊຸມຊົນໃໝ່ ຫຼື ກະທັ້ງປະເທດໃໝ່, ຂຶ້ນກັບຄວາມຈຳເປັນ ແລະ ໂອກາດທີ່ມີຕໍ່ຜູ້ເຄາະຮ້າຍ. ປັດໃຈຕົ້ນຕໍຂອງການກັບຄືນເຂົ້າສູ່ສັງຄົມແມ່ນເພື່ອສົ່ງເສີມການເພິ່ງພາຕົນເອງ ແລະ ມີພູມຕ້ານທານ, ເພື່ອສ້າງຄວາມສາມາດ, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບຄືນບ້ານ ໃຫ້ສາມາດຍົກລະດັບສະພາບການຂອງເຂົາເຈົ້າເອງໃຫ້ດີຂຶ້ນ ອີງຕາມທັກສະ ແລະ ຄວາມປາຖະໜາຂອງເຂົາເຈົ້າ.*

## *ບັນຫາສຳຄັນ: ໂຄງການການກັບຄືນເຂົ້າສູ່ສັງຄົມຂອງທ່ານ ລວມມີ 5 ສ່ວນປະກອບດັ່ງລຸ່ມນີ້ ທີ່ຜູ້ເຄາະຮ້າຍສ່ວນຫຼາຍຕ້ອງການ ແລະ ຈຳເປັນ ຫຼື ບໍ່?*

☑ 1 **ການສະໜັບສະໜູນທີ່ສາມາດຜ່ອນສັ້ນຜ່ອນຍາວໄດ້ ແລະ ດັດປັບສຳລັບແຕ່ລະບຸກຄົນ,** ໂດຍທີ່ຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ເປັນຜູ້ໃຫຍ່ **ມີສິດທິໃນການເລືອກໂດຍມີຂໍ້ມູນພຽງພໍ** – ນີ້ແມ່ນວິທີການທີ່ອີງໃສ່ສິດທິເປັນພື້ນຖານ.

☑ 2 **ການສ້າງຄວາມສາມາດທາງດ້ານເສດຖະກິດ,** ໂດຍມີການຝຶກອົບຮົມທັກສະຕ່າງໆທີ່ມີການສາຍພົວພັນກັບພາກເອກະຊົນຢ່າງຈະແຈ້ງ ແລະ ໂດຍກົງ – ບໍ່ພຽງແຕ່ການຝຶກອົບຮົມເພື່ອໃຫ້ມີການຝຶກອົບຮົມເທົ່ານັ້ນ.

☑ 3 **ການເຄື່ອນຍ້າຍແຮງງານແບບປອດໄພ ແລະ ຖືກກົດໝາຍ** ເປັນຍຸດທະສາດທາງເລືອກການດຳລົງຊີວິດ: ການກັບເຂົ້າສູ່ສັງຄົມບໍ່ຈຳເປັນຕ້ອງໝາຍເຖິງການກັບເມືອເຮືອນ; ເນື່ອງຈາກວ່າມັນບໍ່ປອດໄພ ຫຼື ບໍ່ສາມາດເປັນໄປໄດ້ສຳລັບຜູ້ເຄາະຮ້າຍບາງຄົນ.

☑ 4 **ກະຈາຍໂຄງການຊອກຫາຜູ້ເຄາະຮ້າຍແບບມີການວາງແຜນລ່ວງໜ້າ** ໄປໃນເຂດທີ່ເປັນແຫຼ່ງເປົ້າໝາຍ ແລະ ດ່ານກວດຄົນເຂົ້າ-ອອກ ເມືອງ, ເພື່ອລະບຸຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບເຂົ້າປະເທດຢ່າງບໍ່ເປັນທາງການ ຂອງຜູ້ທີ່ບໍ່ເຄີຍຖືກລະບຸວ່າເປັນຜູ້ເຄາະຮ້າຍຈາກການຄ້າມະນຸດ ຫຼື ຖືກສະເໜີການບໍລິການຕ່າງໆ.

☑ 5 **ຜູ້ໃຫ້ການບໍລິການມີຄວາມພ້ອມທີ່ຈະຊ່ວຍ, ເມື່ອຜູ້ທີ່ກັບຄືນບ້ານພ້ອມ** ທີ່ຈະຮັບການຊ່ວຍເຫຼືອ. ຜູ້ເຄາະຮ້າຍທີ່ກັບຄືນບ້ານອາດຈະບໍ່ຕ້ອງການການບໍລິການໃນທັນທີທັນໃດ.

## ☑ 1 ການສະໜັບສະໜູນທີ່ສາມາດຜ່ອນສັ້ນຜ່ອນຍາວໄດ້ ແລະ ດັດປັບສຳລັບແຕ່ລະບຸກຄົນ, ໂດຍທີ່ຜູ້ເຄາະຮ້າຍຈາກການຄ້າມະນຸດມີສິດທິໃນການເລືອກໂດຍມີຂໍ້ມູນພຽງພໍ

ຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບຄືນບ້ານຈາກຫຼາຍໆສະຖານະການແຕກຕ່າງກັນ, ອີງຕາມຊະນິດຂອງການຖືກກົດຂີ່ຂູດຮີດທີ່ເຂົາເຈົ້າປະສົບ, ອາຍຸ, ເພດ, ວັດທະນະທຳ, ບຸກຄະລິກກະພາບ ແລະ ປັດໃຈອື່ນໆອີກຫຼາຍຢ່າງ, ແຕ່ລະບຸກຄົນອາດຈະມີການຕອບສະໜອງທີ່ແຕກຕ່າງກັນຕໍ່ການສະໜັບສະໜູນທີ່ຖືກສະເໜີໃຫ້. ດັ່ງທີ່ແມ່ຍິງກັບຄືນບ້ານຄົນໄທກ່າວວ່າ *"ປະສົບການຂອງທຸກໆຄົນແມ່ນແຕກຕ່າງກັນແຕ່ທຸກຄົນລ້ວນແຕ່ມີຊີວິດທີ່ລຳບາກ".*[2] ຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບ ຄືນບ້ານບາງຈຳນວນມີຄວາມສາມາດສູງຂຶ້ນ, ບາງຈຳນວນລົ້ມເຫຼວ, ບາງຈຳນວນມີເງິນທ້ອນກັບມາ, ບາງຈຳນວນບໍ່ມີ; ບາງຈຳນວນມີສະພາບຈິດທີ່ເຂັ້ມແຂງ ແລະ ມີພູມຕ້ານທານສູງ ໃນຂະນະທີ່ບາງຈຳນວນຍັງຄົງອ່ອນແອ ແລະ ບອບບາງ. ບົດຮຽນໜຶ່ງທີ່ຖອດຖອນໄດ້ຈາກການເຮັດວຽກກັບຜູ້ເຄາະຮ້າຍ ຈາກການຄ້າມະນຸດທີ່ກັບຄືນບ້ານແມ່ນໂຄງການຊ່ວຍເຫຼືອທີ່ຖືກອອກແບບໄວ້ກ່ອນ ແລະ ແບບລວມໆ "ຂະໜາດດຽວສຳລັບທຸກຄົນ" ຜົນໄດ້ຮັບສ່ວນຫຼາຍແມ່ນຜູ້ທີ່ກັບຄືນບ້ານປະຕິເສດການຊ່ວຍເຫຼືອ ຫຼື ລາອອກກາງທາງຍ້ອນຮູ້ສຶກວ່າບໍ່ເໝາະສົມສຳລັບສະຖານະການສະເພາະຂອງເຂົາເຈົ້າ.

***ການສະໜັບສະໜູນແຕ່ລະບຸກຄົນ*** ຄວນເລີ່ມຕົ້ນຕັ້ງແຕ່ຈຸດທີ່ເຂົາເຈົ້າເລີ່ມອອກຈາກບ້ານ, ຄວາມຕ້ອງການສະເພາະ ແລະ ບັນຫາກັງວົນຂອງແຕ່ລະຄົນ, ຄວາມເຂັ້ມແຂງ, ຊັບພະຍາກອນ ແລະ ຄວາມປາຖະໜາຂອງແຕ່ລະຄົນ. ຂໍ້ມູນດັ່ງກ່າວສາມາດລະບຸໄດ້ໃນຂັ້ນຕອນຄັດເລືອກທຳອິດ ແລະ ຂັ້ນຕອນຮັບເຂົ້າໂຄງການເພື່ອຕັດສິນຊະນິດຂອງການຊ່ວຍເຫຼືອທີ່ຈະສະເໜີ (ບໍ່ພຽງແຕ່ເກັບກຳຂໍ້ມູນຍ້ອນຕ້ອງເກັບກຳຂໍ້ມູນເທົ່ານັ້ນ). ຜູ້ສະໜອງການບໍລິການຈະເຮັດໄດ້ດີທີ່ສຸດເມື່ອການສະໜັບສະໜູນຄວາມຕ້ອງການອັນຈຳເປັນໃຫ້ແຕ່ລະບຸກຄົນສາມາດຜ່ອນສັ້ນຜ່ອນຍາວໄດ້ ແລະ ມີຄວາມກຽມພ້ອມທີ່ຈະຕອບສະໜອງຄວາມຕ້ອງການ ແລະ ສະຖານະການທີ່ແຕກຕ່າງກັນ ໂດຍຜ່ານລະບົບແນະນຳທີ່ກວ້າງ ແລະ ປອດໄພ, ສ້າງສາຍພົວພັນແໜ້ນແຟ້ນກັບຜູ້ສະໜອງການບໍລິການອື່ນ ເຊັ່ນ ສະຖາບັນລັດຖະບານໃນທ້ອງຖິ່ນ ແລະ ພາກເອກະຊົນ.

***ໂຄງການປົກປ້ອງຜູ້ເຄາະຮ້າຍທີ່ນຳໃຊ້ສິດທິເປັນພື້ນຖານທີ່ປະສົບຜົນສຳເລັດ ໃຫ້ຄວາມນັບຖືສິດທິຂອງຜູ້ເຄາະຮ້າຍທີ່ເປັນຜູ້ໃຫຍ່ໃນການເລືອກ.*** ແຮງງານເຄື່ອນຍ້າຍຈຳນວນບໍ່ໜ້ອຍທີ່ເຄື່ອນຍ້າຍຍ້ອນເຫດຜົນທາງດ້ານເສດຖະກິດ ແລະ ຫຼາຍຄົນໃນຈຳນວນແຮງງານເຄື່ອນຍ້າຍດັ່ງກ່າວກາຍເປັນຜູ້ເຄາະຮ້າຍການຄ້າມະນຸດ ທ້າຍທີ່ສຸດກໍກັບບ້ານມືເປົ່າ, ມີເງິນທ້ອນບໍ່ພໍ ຫຼື ກະທັ້ງມີໜີ້ສິນຢ່າງຫຼວງຫຼາຍ. ຜູ້ທີ່ກັບຄືນບ້ານບາງຈຳນວນຖືກກົດດັນຕະຫຼອດເວລາຈາກຄອບຄົວ ໃຫ້ຫາເງິນໃຫ້ໄດ້ຫຼາຍກວ່າທີ່ຈະເປັນໄປໄດ້ໃນອາຊີບປົກກະຕິ ຫຼື ການສະໜັບສະໜູນທາງເລືອກການດຳລົງຊີວິດ. ດັ່ງນັ້ນ, ເຖິງແມ່ນວ່າຈະມີການສະເໜີການຊ່ວຍເຫຼືອສະໜັບສະໜູນ ລວມທັງການໃຫ້ຄຳປຶກສາຕໍ່ຄອບຄົວ ແລະ ການວາງແຜນທາງ

ດ້ານການເງິນ, ໂຄງການຄວນຄາດຄະເນ ແລະ ນັບຖື ການຕັດສິນໃຈ ທີ່ຜູ້ເຄາະຮ້າຍບາງຈໍານວນອາດຈະເລືອກເຮັດວຽກກັບພາກສ່ວນທີ່ບໍ່ເປັນທາງການ, ທັງໃນທ້ອງຖິ່ນ ແລະ ຕ່າງປະເທດ. ແທນທີ່ຈະປະຕິເສດຜູ້ທີ່ກັບຄືນບ້ານທີ່ຕັດສິນໃຈເຮັດວຽກກັບພາກສ່ວນທີ່ບໍ່ເປັນທາງການ ຍ້ອນຄວາມກົດດັນທາງດ້ານເສດຖະກິດ - ສັງຄົມທີ່ຕ້ອງຫາເງິນໃຫ້ໄດ້ຫຼາຍຂຶ້ນ, ມັນເປັນເລື່ອງສໍາຄັນທີ່ຕ້ອງຮັກສາຄວາມນັບຖືຕໍ່ສິດທິຂອງຜູ້ເຄາະຮ້າຍໃນການເລືອກ. ໂຄງການຄວນນັບຖື ແຜນການ ແລະ ຄວາມປາຖະໜາຕໍ່ອະນາຄົດຂອງຜູ້ທີ່ກັບຄືນບ້ານ, ບໍ່ວ່າເຂົາເຈົ້າຈະເລືອກເຮັດວຽກໃນຂະແໜງໃດ ຫຼື ເຂົາເຈົ້າຈະຢູ່ບ້ານ ຫຼື ເຄື່ອນຍ້າຍແຮງງານ. ພະນັກງານເຮັດວຽກເພື່ອສັງຄົມ ແລະ ກຸ່ມເຮັດວຽກຊ່ວຍເຫຼືອເພື່ອນ ຄວນຮັກສາການຕິດຕໍ່ກັບຜູ້ທີ່ເລັດລອດຈາກການເຄື່ອນຍ້າຍແຮງງານດັ່ງກ່າວ ແລະ ສືບຕໍ່ສະເໜີການຊ່ວຍເຫຼືອໃນແບບອື່ນໆ ເຖິງແມ່ນວ່າພວກເຂົາຈະປະຕິເສດຄວາມຊ່ວຍເຫຼືອໃນຄັ້ງທໍາອິດກໍຕາມ.

**ລາຍການບຸລິມະສິດການຊ່ວຍເຫຼືອ ແລະ ຂໍ້ແນະນໍາຈາກຜູ້ທີ່ກັບຄືນບ້ານ**

ໂດຍລວມແລ້ວ, ບໍ່ວ່າຜູ້ທີ່ກັບຄືນບ້ານຈະກັບຄືນໄປດໍາລົງຊີວິດຢູ່ໃນຂົງເຂດໃດກໍຕາມ, ທຸກຄົນທີ່ໃຫ້ສໍາພາດລ້ວນແຕ່ກ່າວວ່າການສະໜັບສະໜູນທີ່ສໍາຄັນ ແລະ ຈໍາເປັນທີ່ສຸດ ສໍາລັບຊີວິດຫຼັງຈາກການກັບຄືນມາບ້ານຂອງເຂົາເຈົ້າລວມມີ:

- ☐ *ຄວາມຊ່ວຍເຫຼືອໃນການສ້າງທັກສະໃໝ່ ແລະ ຊອກວຽກງານ*
- ☐ *ການສະໜັບສະໜູນທາງດ້ານຈິດໃຈ ຈາກເພື່ອນ ຫຼື ຜູ້ໃຫ້ຄໍາແນະນໍາມືອາຊີບ*
- ☐ *ຄໍາແນະນໍາທາງດ້ານກົດໝາຍກ່ຽວກັບສິດທິ ແລະ ທາງເລືອກຂອງເຂົາເຈົ້າ ແລະ ການສະໜັບສະໜູນໃນທຸກໆບາດກ້າວຖ້າຫາກເຂົາເຈົ້າເລືອກທີ່ຈະດໍາເນີນຄະດີທາງກົດໝາຍຕໍ່ຜູ້ທີ່ທາລຸນເຂົາເຈົ້າ*
- ☐ *ການສະໜັບສະໜູນທາງດ້ານການເງິນທີ່ຊ່ວຍໃຫ້ເຂົາເຈົ້າສາມາດສ້າງການດໍາລົງຊີວິດທີ່ມີຄວາມໄຝ່ຝັນສູງກວ່າເກົ່າ*
- ☐ *ຄ່າທົດແທນສໍາລັບການທາລຸນຂອງຜູ້ເຄາະຮ້າຍຈາກອາດຊະຍາກໍາທີ່ໄດ້ຮັບ*
- ☐ *ການຮັກສາສຸຂະພາບທາງດ້ານຮ່າງກາຍ*
- ☐ *ການປົກປ້ອງຈາກການແກ້ແຄ້ນຂອງຜູ້ທີ່ຄ້າມະນຸດ.*

ແມ່ຍິງຮຽກຮ້ອງໃຫ້ຕົວແທນຕ່າງໆ ທ້າວທັນໃນການກະຈາຍການອອກໄປຊອກຫາຜູ້ທີ່ເລັດລອດຈາກການຄ້າມະນຸດ, ໃຫ້ຮັກສາການສື່ສານທີ່ຈະແຈ້ງ ແລະ ຕໍ່ເນື່ອງໃນໄລຍະຍາວ ແລະ ຮັບຮູ້ວ່າບໍ່ແມ່ນແມ່ຍິງໝົດທຸກຄົນຈະຕ້ອງການການບໍລິການທັງໝົດຄົບຊຸດ ເຊິ່ງການບໍລິການບາງຢ່າງອາດຈະຕ້ອງການໃນທັນທີທັນໃດ, ບາງຢ່າງໃນອະນາຄົດ ແລະ ບາງຢ່າງອາດຈະບໍ່ຕ້ອງການເລີຍ.

## ☑ 2 ການສ້າງຄວາມສາມາດທາງດ້ານເສດຖະກິດ, ບໍ່ພຽງແຕ່ການຝຶກອົບຮົມເພື່ອໃຫ້ມີການຝຶກອົບຮົມເທົ່ານັ້ນ

***ປັດໃຈທີ່ຊຸກດັນໃຫ້ຄົນເລີ່ມເຄື່ອນຍ້າຍແຮງງານໃນຕອນທຳອິດ ສ່ວນຫຼາຍຈະຍັງຄົງເປັນບັນຫາທ້າທາຍຕົ້ນຕໍໃນເວລາກັບຄືນມາ.*** ຜູ້ທີ່ກັບຄືນບ້ານຄົນໄທ ແລະ ຟີລິບປິນໃຫ້ສຳພາດວ່າມັນມີຄວາມສຳຄັນທີ່ຕ້ອງຮັບຮູ້ປັດໃຈທີ່ສົ່ງເສີມ ແລະ ເຮັດໃຫ້ມີການເຄື່ອນຍ້າຍແຮງງານ ເຊັ່ນ ຄວາມຮັບຜິດຊອບທາງດ້ານຄອບຄົວ, ຄວາມຈຳເປັນທາງດ້ານເສດຖະກິດ ແລະ ຄວາມກົດດັນໜີ້ສິນ, ການຂາດເຂີນທາງເລືອກການເຮັດວຽກ ແລະ ຄວາມປາຖະໜາຕໍ່ຖານະ ແລະ ຄວາມນັບຖືທາງສັງຄົມ ທີ່ໄດ້ຈາກຄວາມມັ່ງມີ. ປັດໃຈເຫຼົ່ານີ້ຍັງຄົງເປັນປັດໃຈກົດດັນຕົ້ນຕໍຫຼັງຈາກແມ່ຍິງກັບຄືນບ້ານ. ແມ່ຍິງທີ່ເຄີຍປະສົບການຄ້າມະນຸດ ແລະ ການເອົາປຽບແຮງງານໃນຕ່າງປະເທດລາຍງານວ່າ ເຖິງແມ່ນວ່າຈະຖືກທາລຸນນະກຳຢ່າງຮຸນແຮງ ແຕ່ຄວາມກັງວົນທີ່ຍິ່ງໃຫຍ່ທີ່ສຸດຂອງພວກເຂົາເມື່ອກັບຄືນບ້ານຍັງລວມທັງການສະໜັບສະໜູນສະມາຊິກຄອບຄົວ, ມີວຽກງານທີ່ມີລາຍໄດ້ຄົງທີ່ ແລະ ມີເງິນພຽງພໍທີ່ຈະບໍ່ຕ້ອງກັງວົນກ່ຽວກັບໜີ້ສິນ. ແນ່ນອນທີ່ສຸດ, ຫຼາຍໆການສຶກສາໄດ້ເຜີຍໃຫ້ເຫັນວ່າຜູ້ທີ່ກັບຄືນບ້ານຈາກການຄ້າມະນຸດເນັ້ນໜັກຄວາມເປັນໄປໄດ້ຂອງການດຳລົງຊີວິດໃນອະນາຄົດ ແລະ ຄວາມເປັນເອກະລາດທາງດ້ານເສດຖະກິດ ຫຼາຍກວ່າໃຫ້ຕົນເອງຈົມຢູ່ໃນຄວາມທຸກທໍລະມານຈາກການກົດຂີ່ ຫຼື ຄວາມປາຖະໜາທີ່ຈະກັບໄປຫາສະຖານະພາບຄືກັບກ່ອນການເຄື່ອນຍ້າຍແຮງງານ.[4] ຜູ້ທີ່ກັບຄືນບ້ານຄົນໄທ ແລະ ຟີລິບປິນສ່ວນຫຼາຍກ່າວວ່າເຂົາເຈົ້າກັງວົນທີ່ສຸດກ່ຽວກັບການເປັນໜີ້ສິນ ແລະ ບໍ່ມີເງິນທ້ອນໂຮມພຽງພໍ, ສິ່ງທີສອງແມ່ນກ່ຽວກັບການຕອບສະໜອງຂອງຊຸມຊົນ/ ມິນທິນ. ໜ້າສົນໃຈທີ່ຄວາມກັງວົນຂອງເຂົາເຈົ້າກ່ຽວກັບການມີມົນທິນໃນຊຸມຊົນກຳເນີດຂອງເຂົາເຈົ້າ ແມ່ນຄວາມຢ້ານຕົ້ນຕໍທີ່ຈະກັບຄືນມາບ້ານແບບ "ລົ້ມເຫຼວ" ທາງດ້ານການເງິນ ດັ່ງທີ່ຄົນຟີລິບປິນ ສອງຄົນບັນຍາຍວ່າ:

> *"ຂ້ອຍບໍ່ສາມາດຍອມຮັບຄວາມຈິງທີ່ວ່າຂ້ອຍຕ້ອງກັບບ້ານໂດຍທີ່ບໍ່ມີເງິນ.*
> *ຂ້ອຍລົ້ມເຫຼວ. ຂ້ອຍບໍ່ສາມາດສົ່ງຫຍັງໃຫ້ຄອບຄົວ ແລະ ..."*
> *"ຂ້ອຍບໍ່ສາມາດຍອມຮັບຄວາມຈິງທີ່ວ່າຂ້ອຍບໍ່ປະສົບຜົນສຳເລັດໃນປະເທດດູໄບ. ຂ້ອຍບໍ່ມີກະທັ້ງເງິນຈັກກີບ. ຂ້ອຍຕ້ອງກັບບ້ານໃນປະເທດຟີລິບປິນແບບລົ້ມເຫຼວ..."*

ແມ່ຍິງທີ່ກັບຄືນບ້ານຄົນໄທອະທິບາຍວ່າເຂົາເຈົ້າມີຄວາມກັງວົນຄ້າຍໆກັນ ໂດຍສະເພາະແມ່ນມົນທິນທີ່ກັບຄືນບ້ານໂດຍບໍ່ມີເງິນກວມເອົາມົນທິນ ກ່ຽວກັບອາຊີບຂາຍປະເວນີໃນຕ່າງປະເທດ:

---

[4] ເມ-ເລນ ສະກົວບຣີ ແລະ ມາຣຽນ ທະວິດ (2007). *ປະເຊີນກັບການກັບຄືນບ້ານ: ທັດສະນະຄະຕິກ່ຽວກັບການສົ່ງກັບຄືນປະເທດ ໃນກຸ່ມແມ່ຍິງໄນຈີເຣຍ ທີ່ຄ້າປະເວນີ ໃນນອກແວ.* ຟາໂຟ; ແອນເນັດ ບຣູນອບສະກີສ ແລະ ຣີເບັກກາ ເຊີທີສ (2007). *ປະອະດີດໄວ້ເບື້ອງຫຼັງບໍ? ເມື່ອຜູ້ເຄາະຮ້າຍຈາກການຄ້າມະນຸດປະຕິເສດຄວາມຊ່ວຍເຫຼືອ.* ຟາໂຟ; ກູຣີ ທິວດາ, ມາຣຽນ ທະວິດ, ແອນເນັດ ບຣູນອບສະກີສ (2005). *ເກັບກຳຂໍ້ມູນ. ການທົບທວນບົດຄົ້ນຄວ້າທີ່ມີຢູ່ ກ່ຽວກັບການຄ້າມະນຸດເພື່ອຄ້າປະເວນີ.* ຟາໂຟ; ເພຍສັນ, ອີເລນ (2002). *ການຄ້າມະນຸດ, ສິດທິມະນຸດ: ນິຍາມຄືນການປົກປ້ອງຜູ້ເຄາະຮ້າຍ.* ການຕໍ່ຕ້ານການເປັນຂ້າທາດສາກົນ.

*"ຖ້າຂ້ອຍເອົາເງິນກັບມາກັບຂ້ອຍ, ຄົນໃນບ້ານຈະປ່ຽນການປະພຶດຕໍ່ຂ້ອຍ... ພວກເຂົາຈະບໍ່ວິຈານຂ້ອຍ. ຂ້ອຍຈະເປັນຄືກັບກົ່ນທອງທວານສໍາລັບພວກເຂົາ, ຂ້ອຍອາດຈະມີກົ່ນເໝັນ ແລະ ພວກເຂົາກໍຍັງຈະບອກວ່າຂ້ອຍມີກົ່ນຫອມຖ້າຂ້ອຍມີເງິນ..."*

**ເຫດຜົນ 5 ປະການ ເພື່ອເນັ້ນໜັກການສ້າງຄວາມສາມາດທາງດ້ານເສດຖະກິດ ສໍາລັບຜູ້ທີ່ເລັດລອດຈາກການຄ້າມະນຸດ.**

ໃນຂະນະທີ່ການສ້າງຄວາມສາມາດທາງດ້ານເສດຖະກິດ ສ່ວນຫຼາຍແລ້ວແມ່ນບັນຫາຮີບດ່ວນທີ່ສຸດຂອງຜູ້ເຄາະຮ້າຍທີ່ກັບຄືນບ້ານ, ແຕ່ບັນຫາດັ່ງກ່າວບໍ່ໄດ້ຖືກຈັດຢູ່ໃນບຸລິມະສິດອັນດັບສູງ ໃນໂຄງການປົກປ້ອງຜູ້ເຄາະຮ້າຍ ແລະ ການກັບຄືນເຂົ້າສູ່ສັງຄົມ ທີ່ມີຢູ່. ເຫດຜົນ 5 ປະການທີ່ການສ້າງຄວາມສາມາດທາງດ້ານເສດຖະກິດຄວນຖືກຈັດຢູ່ໃນອັນດັບສູງມີຄື:

- ✓ *ສ່ວນຫຼາຍຜູ້ທີ່ເລັດລອດບອກວ່າມັນແມ່ນສິ່ງທີ່ເຂົາເຈົ້າຕ້ອງການ ແລະ ຈໍາເປັນ.*
- ✓ *ກິດຈະກໍາການສ້າງຄວາມສາມາດທາງດ້ານເສດຖະກິດສາມາດກະຕຸ້ນການເຂົ້າຮ່ວມໃນການບໍລິການອື່ນໆທີ່ຜູ້ເລັດລອດອາດຈະບໍ່ເຫັນຜົນປະໂຫຍດ ຫຼື ຄວາມຈໍາເປັນ ໃນທັນທີທັນໃດ.*
- ✓ *ການມີສ່ວນຮ່ວມໃນກິດຈະກໍາການສ້າງຄວາມສາມາດທາງດ້ານເສດຖະກິດຮຽກຮ້ອງການມີສ່ວນຮ່ວມໃນຊຸມຊົນທີ່ກວ້າງຂວາງ ແລະ ເປັນການປະກອບສ່ວນເຂົ້າໃນການກັບຄືນເຂົ້າສູ່ສັງຄົມ.*
- ✓ *ການສ້າງຄວາມສາມາດທາງດ້ານເສດຖະກິດສາມາດຫຼຸດຜ່ອນມົນທິນທີ່ຕິດມາກັບການເຄື່ອນຍ້າຍແຮງງານທີ່ບໍ່ປະສົບຜົນສໍາເລັດ ແລະ ກາຍເປັນການສ້າງຄວາມສາມາດທາງດ້ານສັງຄົມ.*
- ✓ *ການມີສ່ວນຮ່ວມໃນກິດຈະກໍາການສ້າງຄວາມສາມາດທາງດ້ານເສດຖະກິດ ສາມາດກາຍເປັນແຮງຈູງໃຈທີ່ສໍາຄັນໃນການລົງຮາກປັກຖານໃນສະຖານທີ່ໃດໜຶ່ງ, ປັບປຸງການກັບຄືນເຂົ້າສູ່ສັງຄົມ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ການຖືກຄ້າມະນຸດໃນອະນາຄົດ. ກິດຈະກໍາດັ່ງກ່າວຍັງມີຜົນປະໂຫຍດໃນການປັບໂຕກັບຄືນເຂົ້າສູ່ຄອບຄົວ ເມື່ອຖືກດໍາເນີນຮ່ວມກັບສະມາຊິກໃນຄອບຄົວ.*

***ການຝຶກອົບຮົມທັກສະທີ່ມີຄຸນນະພາບ ແລະ ສາຍພົວພັນກັບພາກເອກະຊົນ.*** ເຖິງແມ່ນວ່າຜູ້ທີ່ກັບຄືນບ້ານຫຼາຍຄົນຢາກເຮັດວຽກເພື່ອປັບປຸງຊີວິດການເປັນຢູ່ຂອງພວກເຂົາເຈົ້າ, ສ່ວນຫຼາຍແລ້ວພວກເຂົາບໍ່ມີທັກສະທີ່ຕະຫຼາດຕ້ອງການພຽງພໍ ແລະ ເມື່ອກັບຄືນມາພວກເຂົາເຈົ້າກໍປະສົບບັນຫາຄືເກົ່າ ກໍຄືການຂາດໂອກາດໃນການເຮັດວຽກທີ່ດີ ທີ່ເຮັດໃຫ້ເຂົາເຈົ້າຕ້ອງອອກໄປຊອກວຽກນອກປະເທດຕັ້ງແຕ່ເລີ່ມຕົ້ນ. ດັ່ງນັ້ນ, ການຝຶກອົບຮົມທັກສະວຽກງານ ແລະ ທັກສະທຸລະກິດ ທີ່ມີຄຸນນະພາບແມ່ນອົງປະກອບ ທີ່ຈໍາເປັນຕໍ່ການກັບຄືນເຂົ້າສູ່ສັງຄົມທີ່ປະສົບຜົນສໍາເລັດ ທີ່ນໍາໄປສູ່ການມີວຽກເຮັດ ແລະ ມີຄວາມເປັນເອກະລາດທາງດ້ານເສດຖະກິດ. ເຖິງຢ່າງໃດກໍຕາມ, ເຖິງແມ່ນວ່າເປັນການຫວັງດີ, ຫຼັກສູດຝຶກອົບຮົມທັກສະທີ່ສະເໜີໂດຍຜູ້ສະໜອງການບໍລິການສ່ວນຫຼາຍແມ່ນມີຄວາມຈໍາກັດ ທາງດ້ານຄວາມຫຼາກຫຼາຍ, ຄຸນນະພາບ ແລະ ຄວາມເໝາະສົມ ເມື່ອທຽບໃສ່ຕະຫຼາດວຽກງານໃນທ້ອງຖິ່ນ. ຫຼາຍຄັ້ງທີ່ການຝຶກອົບຮົມທັກສະບໍ່ໄດ້ນໍາໄປສູ່ໂອກາດການມີວຽກເຮັດ ຫຼື ການປັບປຸງຊີວິດການເປັນຢູ່ໃນໄລຍະຍາວ ສໍາລັບຜູ້ທີ່ກັບຄືນບ້ານ ແລະ ລູກຫຼານຂອງພວກເຂົາເຈົ້າ.

ເພື່ອປັບປຸງຄຸນນະພາບຂອງການຝຶກອົບຮົມທັກສະ ແລະ ເຮັດໃຫ້ມີປະໂຫຍດ ແລະ ໜ້າສົນໃຈຕໍ່ຜູ້ທີ່ກັບຄືນບ້ານ ມັນມີຄວາມຈຳເປັນທີ່ຕ້ອງເຮັດຫຼາຍກວ່າໂຄງການຝຶກອົບຮົມຂອງອົງການທີ່ບໍ່ແມ່ນລັດຖະບານທີ່ມີການຝຶກອົບຮົມຂະໜາດນ້ອຍພາຍໃນ; ຄວນສ້າງສາຍພົວພັນທີ່ດີຂຶ້ນກັບພາກສ່ວນເອກະຊົນ ແລະ ມີການຝຶກອົບຮົມໃນວຽກຕົວຈິງຕາມຊີວິດຈິງ. ນອກນັ້ນ ຍັງມີຄວາມຈຳເປັນທີ່ຕ້ອງຮັບປະກັນວ່າການຝຶກອົບຮົມທັກສະຕ່າງໆມີການຕິດຕາມຢ່າງພຽງພໍໂດຍການຊອກວຽກເຮັດໃຫ້ຜູ້ເຂົ້າຮ່ວມ ເພື່ອໃຫ້ເວລາທີ່ໃຊ້ໃນການຝຶກອົບຮົມເປັນປະໂຫຍດ. ການຮ່ວມມືກັບພາກເອກະຊົນ ລວມທັງອົງການທີ່ເປັນຜູ້ຈ້າງງານ, ສະມາຄົມທຸລະກິດ ແລະ ສະພາການຄ້າຂອງທ້ອງຖິ່ນ ສາມາດເຮັດໃຫ້ການຊອກວຽກງານໄດ້ດີຂຶ້ນໂດຍກົງ ສຳລັບຜູ້ທີ່ກັບຄືນບ້ານທີ່ມີຄຸນວຸດທິ. ການຕົກລົງກ່ຽວກັບການຝຶກງານ, ເງິນຄ່າຈ້າງຊ່ວຍເຫຼືອ, ເງິນເດືອນ ແລະ ໂຄງການຄວາມຮັບຜິດຊອບທາງສັງຄົມຂອງບໍລິສັດ ລ້ວນແຕ່ສາມາດນຳໃຊ້ເຂົ້າໃນການສ້າງແຮງຈູງໃຈ ໃນກຸ່ມຜູ້ຈ້າງງານໃນການສະໜອງວຽກງານໃຫ້ຜູ້ເລັດລອດທີ່ມີຄຸນວຸດທິ ແລະ ໄດ້ຮັບການຝຶກອົບຮົມຢ່າງເໝາະສົມ.

**ຄວາມຈຳກັດ 4 ຢ່າງ ທີ່ພົບເລື້ອຍໆໃນອົງປະກອບການຝຶກອົບຮົມທັກສະ ແລະ ການດຳລົງຊີວິດຂອງໂຄງການກັບຄືນເຂົ້າສູ່ສັງຄົມ:**

1. **ພຽງແຕ່ສະເໜີການຝຶກອົບຮົມ 2-3 ກິດຈະກຳ ທີ່ເປັນວິຊາເຊື່ອວ່າກວມເລື່ອງບົດບາດຍິງ-ຊາຍ,** ຕົວຢ່າງ, ຫ້ອງຮຽນຕັດຫຍິບ ຫຼື ແຕ່ງກິນ ເຊິ່ງບໍ່ແນໃສ່ປ້ອນຕະຫຼາດ ຫຼື ສາມາດຮັບປະກັນການຫາເງິນຢ່າງຮີບດ່ວນທີ່ຈຳເປັນສຳລັບຜູ້ເຂົ້າຮ່ວມ. ໂຄງການຝຶກອົບຮົມວິຊາຊີບໃນ "ຂະແໜງແບບເກົ່າໆ" ສາມາດເຮັດໃຫ້ຜູ້ທີ່ກັບຄືນບ້ານເຂົ້າໄປເຮັດວຽກຢູ່ໃນຕະຫຼາດທີ່ໜ້າເບື່ອໜ່າຍ ເຊິ່ງສ່ວນຫຼາຍບໍ່ມີທັກສະທຸລະກິດ ແລະ ການເງິນພໍທີ່ຈະສາມາດແຂ່ງຂັນກັບທຸລະກິດທີ່ສ້າງຕັ້ງມາດົນກ່ອນແລ້ວ. ຍິ່ງໄປກວ່ານັ້ນ, ຫຼັງຈາກໃຊ້ເວລາໃນຕ່າງປະເທດ ແລະ ມີໂອກາດພົບເຫັນການໃຊ້ມີວິດຫຼາກຫຼາຍຮູບແບບ ແລະ ຫຼາກຫຼາຍວັດທະນະທຳ, ຜູ້ທີ່ກັບຄືນບ້ານຫຼາຍຄົນບໍ່ມີຄວາມກະຕືລືລົ້ນເມື່ອເຫັນໂຄງການຝຶກອົບຮົມວິຊາຊີບແບບເກົ່າໆເຊັ່ນນີ້.
2. **ຖືເອົາທັກສະທີ່ຝຶກອົບຮົມເປັນເປົ້າໝາຍແທນທີ່ຈະເຫັນເປັນບາດກ້າວໜຶ່ງທີ່ຈະນຳໄປສູ່ວຽກງານທີ່ດີ** ແລະ ໂອກາດການດຳລົງຊີວິດໃໝ່. ການຝຶກອົບຮົມສ່ວນຫຼາຍບໍ່ມີການຕິດຕາມດ້ວຍໂຄງການ ແລະ ການບໍລິການຊອກວຽກງານ.
3. **ຖືເອົາການຝຶກອົບຮົມທັກສະເປັນການຮັກສາທາງດ້ານວິຊາອາຊີບ ເພື່ອຮັກສາຄວາມເຈັບປວດທາງດ້ານສັງຄົມ-ຈິດໃຈ, ຫຼາຍກວ່າເປັນກິດຈະກຳສ້າງວິຊາອາຊີບປ້ອນຕະຫຼາດ** ເຊິ່ງມີຈຸດປະສົງໃນການຊ່ວຍຜູ້ທີ່ກັບຄືນບ້ານໃຫ້ໄດ້ວຽກງານທີ່ດີ ແລະ ມີລາຍໄດ້ເປັນຂອງເຂົາເຈົ້າເອງ. ການຝຶກອົບຮົມບາງຫຼັກສູດກໍຍາວເກີນໄປ (ບາງຄັ້ງເປັນເວລາຫຼາຍເດືອນ) ໂດຍບໍ່ມີການສະໜອງອັດຕາກິນທີ່ເໝາະສົມ ຫຼື ນັບຖືຄວາມຈຳເປັນຂອງຜູ້ທີ່ກັບຄືນທີ່ຕ້ອງຫາເງິນໃຫ້ຕົນເອງ ແລະ ຄອບຄົວຂອງເຂົາເຈົ້າ ໃນເວລາທີ່ກຳລັງຢູ່ໃນຫຼັກສູດການຝຶກອົບຮົມ.
4. **ບໍ່ໄດ້ພິຈາລະນາຢ່າງລະອຽດຄວາມແຕກຕ່າງທາງດ້ານຄວາມເໝາະສົມ ແລະ ຄວາມໄຝ່ຝັນຂອງແຕ່ລະບຸກຄົນ** ໃນບັນດາຜູ້ທີ່ກັບຄືນບ້ານ.

## ☑ 3 *ການກັບໄປເຄື່ອນຍ້າຍແຮງງານອີກ ທີ່ປອດໄພ ແລະ ຖືກກົດໝາຍ ເປັນຍຸດທະສາດທາງເລືອກການດຳລົງຊີວິດ*

***ການກັບຄືນເຂົ້າສູ່ສັງຄົມບໍ່ຈຳເປັນຕ້ອງແມ່ນກ່ຽວກັບ "ການເມືອບ້ານເຮືອນ."*** ຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບຄືນບ້ານຫຼາຍຄົນ ກັບໄປເຄື່ອນຍ້າຍແຮງງານອີກ ເພື່ອເຮັດວຽກ ແລະ ຫາເງິນຈາກຕ່າງປະເທດໃຫ້ໄດ້ຫຼາຍກວ່າທີ່ສາມາດເປັນໄປໄດ້ໃນບ້ານເກີດ. ຄົນຟີລິບປິນທີ່ໃຫ້ສຳພາດ 2-3 ຄົນ ໃນການສຶກສາສະບັບນີ້ ຖືວ່າຕົນເອງກັບມາ ແລະ ຈະບໍ່ກັບໄປອີກ[5]; ໃນການສຶກສາອື່ນໆກ່ຽວກັບຜູ້ເຄາະຮ້າຍຈາກການຄ້າມະນຸດຄົນພະມ້າ ແລະ ຟີລິບປິນ, ຫຼາຍກວ່າ 70%[6] ຂອງຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບຄືນບ້ານຕັດສິນໃຈທີ່ຈະກັບໄປເຄື່ອນຍ້າຍແຮງງານອີກ, ເຖິງແມ່ນວ່າຫຼັງຈາກໄດ້ຮັບປະໂຫຍດຈາກໂຄງການກັບຄືນເຂົ້າສູ່ສັງຄົມ. ຫຼາຍຄົນທີ່ຕ້ອງການຈະກັບໄປເຄື່ອນຍ້າຍແຮງງານອີກ ຮູ້ສຶກວ່າເວລາທີ່ເຂົາເຈົ້າເດີນທາງໄປເຮັດວຽກເທື່ອໜ້າ ພວກເຂົາຈະມີການກະກຽມຕໍ່ອັນຕະລາຍຫຼາຍຂຶ້ນ ແລະ ສາມາດມີວິທີປົກປ້ອງຕົນເອງ ແລະ ຫາວຽກໄດ້. ໃນຂະນະທີ່ມັນມີຄວາມສຳຄັນໃນການສະເໜີຄວາມຊ່ວຍເຫຼືອການສ້າງຄວາມສາມາດທາງດ້ານເສດຖະກິດ ແລະ ການເງິນ ທີ່ບ້ານເກີດຂອງຜູ້ທີ່ກັບຄືນບ້ານ, ການສະເໜີຄວາມຊ່ວຍເຫຼືອໃຫ້ຜູ້ທີ່ກັບຄືນບ້ານ ທີ່ມີຄວາມເປັນໄປໄດ້ທີ່ຈະເຄື່ອນຍ້າຍແຮງງານອີກ ກໍມີຄວາມສຳຄັນເທົ່າທຽມກັນ ເຊິ່ງສາມາດເຮັດໄດ້ດ້ວຍການສະເໜີ ແລະ ສົ່ງເສີມ ***ທາງເລືອກການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ຖືກກົດໝາຍເຂົ້າໃນໂຄງການກັບຄືນເຂົ້າສູ່ສັງຄົມ***, ເພື່ອຮັບປະກັນວ່າຜູ້ທີ່ເຄື່ອນຍ້າຍແຮງງານຫຼາຍຄັ້ງມີຄວາມກຽມພ້ອມ ແລະ ຮູ້ວິທີການຊອກຄວາມຊ່ວຍເຫຼືອຖ້າຫາກຈຳເປັນ.

ຄວາມໄຝ່ຝັນທີ່ຜູ້ເຄາະຮ້າຍຈາກການຄ້າມະນຸດສາມາດກັບຄືນບ້ານໄປຫາຄອບຄົວ ແລະ ຊຸມຊົນ ແລະໃຊ້ຊີວິດທີ່ດີ ບໍ່ສາມາດເປັນຈິງໄດ້ສະເໝີໄປ. ຜູ້ເຄາະຮ້າຍຈາກການຄ້າມະນຸດ ແລະ ຄ້າແຮງງານຫຼາຍຄົນ ບໍ່ມີການຕັດສິນໃຈທີ່ຈະກັບບ້ານ. ສຳລັບບາງຄົນ, ການກັບບ້ານແມ່ນທາງເລືອກສຸດທ້າຍສຳລັບເຂົາເຈົ້າ ເຊິ່ງພວກເຂົາຈະເລືອກກໍຕໍ່ເມື່ອເງື່ອນໄຂອື່ນເປັນໄປບໍ່ໄດ້ ຫຼື ເມື່ອຫຼີກລ່ຽງບໍ່ໄດ້. ແນ່ນອນ, ການກັບບ້ານແມ່ນທາງອອກ ແລະ ທາງເລືອກທີ່ດີທີ່ສຸດສຳລັບບາງຈຳນວນ; ເຖິງຢ່າງໃດກໍຕາມ, ບາງຈຳນວນບໍ່ສາມາດກັບບ້ານໄດ້ຍ້ອນສາເຫດດັ່ງລຸ່ມນີ້:

- ພວກເຂົາເຈົ້າບໍ່ຖືກຍອມຮັບ;
- ເປັນອັນຕະລາຍສຳລັບພວກເຂົາເຈົ້າ (ຄວາມຂັດແຍ້ງ, ຖືກຄ້າມະນຸດອີກ);
- ພວກເຂົາຕ້ອງການການດູແລທາງດ້ານການແພດ ແລະ ຈິດຕະແພດ ທີ່ບໍ່ມີໃນທ້ອງຖິ່ນ; ຫຼື

---

[5] ເອຊິດສ, ເອັມ. ເອັມບີ (2001). *ແມ່ຍິງຟີລິບປິນໃນຕອນທ້າຍຂອງການເດີນທາງ: ການສຳຫຼວດບັນຫາບົດບາດຍິງ-ຊາຍໃນແຮງງານເຄື່ອນຍ້າຍທີ່ກັບຄືນບ້ານ.* ບົດຄົ້ນຄວ້າສະເໜີທີ່ກອງປະຊຸມສຳມະນາສາກົນກ່ຽວກັບແຮງງານເຄື່ອນຍ້າຍສາກົນ ແລະ ການປ່ຽນແປງທາງດ້ານເສດຖະກິດ-ສັງຄົມ ໃນອາຊີຕາເວັນອອກ ແລະ ອາຊີຕາເວັນອອກສຽງໃຕ້, ສູນເຄື່ອນຍ້າຍແຮງງານ ສະກາລາບຣີນີ, 2001. ບົດສຶກສາສະບັບນີ້ໄດ້ເນັ້ນໃສ່ແຮງງານທີ່ກັບຄືນບ້ານເພດຍິງ ໂດຍລວມ ແລະ ບໍ່ໄດ້ຈຳກັດໃນຂອບເຂດພຽງແຕ່ ຜູ້ເຄາະຮ້າຍຈາກການຄ້າມະນຸດ.

[6] ໃນບົດສຶກສາຂອງ ເອຊິດສ (2001), 76% ຂອງແຮງງານທີ່ກັບຄືນບ້ານໃຫ້ສຳພາດໄດ້ກ່າວເຖິງຄວາມປາຖະໜາທີ່ຈະກັບໄປເຄື່ອນຍ້າຍແຮງງານອີກ ແລະ ໃນໄລຍະການປະເມີນຜົນພາຍໃນຂອງໂຄງການກັບຄືນເຂົ້າສູ່ສັງຄົມ (ບົດສຶກສາຕິດຕາມ) ຜູ້ຂຽນພົບວ່າປະມານ 75% ຂອງຜູ້ເຄາະຮ້າຍຈາກການຄ້າມະນຸດຄົນພະມ້າ (ແຊນ) ຜູ້ທີ່ໄດ້ຮັບຄວາມຊ່ວຍເຫຼືອໃນການກັບບ້ານ ແລະ ກັບເຂົ້າສູ່ສັງຄົມໄດ້ກັບໄປເຄື່ອນຍ້າຍແຮງງານໃນປະເທດໄທພາຍໃນໜຶ່ງປີທີ່ກັບຄືນມາ.

- ພວກເຂົາບໍ່ມີຄອບຄົວ ຫຼື ຊຸມຊົນທີ່ຈະກັບໄປຫາ.

ໝາຍຄວາມວ່າ ຜູ້ທີ່ກັບຄືນບ້ານຫຼາຍຄົນຕ້ອງປັບໂຕເຂົ້າສູ່ສັງຄົມທີ່ບໍ່ແມ່ນບ່ອນທີ່ເຂົາເຈົ້າຈາກມາ ດັ່ງນັ້ນຈຶ່ງມີຄວາມຕ້ອງການຫຼາຍທາງເລືອກການປັບໂຕເຂົ້າສູ່ສັງຄົມ ນອກເໜືອຈາກວິທີແບບເກົ່າໆ. ຕົວຢ່າງ, ຜູ້ທີ່ກັບຄືນບ້ານໃນເຂດຊົນນະບົດທີ່ເຄີຍອາໄສ ແລະ ເຮັດວຽກໃນເຂດຕົວເມືອງເປັນເວລາຫຼາຍປີ ອາດຈະເໝາະກັບ***ການປັບໂຕເຂົ້າສູ່ສັງຄົມໃນຕົວເມືອງ***ຫຼາຍກວ່າ. ພວກເຂົາເຈົ້າອາດຈະຮູ້ສຶກມີມິນທິນໜ້ອຍກວ່າຢູ່ທີ່ບ້ານ ແລະ ອາດຈະຮູ້ສຶກວ່າມີທາງເລືອກໃນການເຮັດວຽກ ແລະ ການດຳລົງຊີວິດຫຼາຍກວ່າເມື່ອຢູ່ໃນເຂດຕົວເມືອງ.

ທາງເລືອກອີກທາງໜຶ່ງກ່ຽວກັບການກັບຄືນເຂົ້າສູ່ສັງຄົມແມ່ນອາດຈະພິຈາລະນາ ***ການກັບເຂົ້າສູ່ສັງຄົມໂດຍອີງໃສ່ຈຸດໝາຍປາຍທາງເປັນພື້ນຖານ*** ຖ້າເປັນໄປໄດ້. ຜູ້ທີ່ເລັດລອດຈາກການຄ້າມະນຸດ ທີ່ເໝາະສົມທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ສາມາດຢູ່ໃນປະເທດ/ ເຂດປາຍທາງທີ່ເຄື່ອນຍ້າຍແຮງງານຢ່າງຖືກກົດໝາຍນັ້ນ ອາດຈະມີການສະເໜີຄວາມຊ່ວຍເຫຼືອຂັ້ນຕົ້ນ ແລະ ສະໜັບສະໜູນໃນການຂໍອະນຸຍາດເຮັດວຽກທີ່ຈຳເປັນ ແລະ ຊອກຫາວຽກໃໝ່ທີ່ດີໃນບ່ອນເຮັດວຽກທີ່ບໍ່ຖືກເອົາປຽບ. ບາງຄັ້ງນີ້ແມ່ນທາງອອກທີ່ຕ້ອງການຫຼາຍກວ່າສຳລັບຜູ້ເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນ, ເນື່ອງຈາກວ່າການຢູ່ຕໍ່ທີ່ປາຍທາງການເຄື່ອນຍ້າຍແຮງງານໂດຍມີອາຊີບໃໝ່ ຈະຊ່ວຍເຂົາເຈົ້າໃນການສ້າງຄວາມສາມາດທາງດ້ານເສດຖະກິດໄວຂຶ້ນ, ດັ່ງທີ່ແມ່ຍິງຄົນຟີລິບປິນກ່າວໄວ້ລຸ່ມນີ້. ຫຼັງຈາກໜີອອກຈາກການຖືກເອົາປຽບແຮງງານທີ່ປະເທດບຣູໄນ, ລາວກໍຍັງບໍ່ຢາກກັບໄປປະເທດຟີລິບປິນ ແຕ່ຍັງຢາກພະຍາຍາມຕື່ມອີກເພື່ອຍົກລະດັບສະຖານະພາບການເງິນໃຫ້ດີຂຶ້ນກ່ອນຈະກັບເມືອບ້ານ:

> *"ຖ້າພວກເຮົາມີໂອກາດເຮັດວຽກຢູ່ທີ່ນັ້ນ (ໃນບຣູໄນ) ເປັນເວລາ 6 ເດືອນ ພວກເຮົາກໍສາມາດທ້ອນເງິນໄດ້ຈຳນວນໜຶ່ງ. ແຕ່ພວກເຮົາເຮັດໄປທັງໝົດໂດຍບໍ່ໄດ້ຫຍັງກັບຄືນເລີຍ. ບໍ່ພຽງແຕ່ພວກເຮົາຕ້ອງກັບບ້ານເທົ່ານັ້ນ, ພວກເຮົາຍັງມີໜີ້ສິນທີ່ຕ້ອງຈ່າຍຄືນອີກ..."*

ເຖິງແມ່ນວ່າການກັບຄືນເຂົ້າສູ່ສັງຄົມໂດຍອີງໃສ່ຈຸດໝາຍປາຍທາງເປັນພື້ນຖານ ອາດຈະມີຂໍ້ຫຍຸ້ງຍາກທາງດ້ານການເມືອງ ແຕ່ໃນຫຼາຍກໍລະນີມັນຕ້ອງການຄ່າໃຊ້ຈ່າຍໜ້ອຍແຕ່ໃຫ້ຜົນສູງ. ຕົວຢ່າງ, ຖ້າແຮງງານເຄື່ອນຍ້າຍໃນໂຮງງານ ຂ ຖືກເອົາປຽບ ແລະ ຖືກລະບຸວ່າເປັນຜູ້ເຄາະຮ້າຍການຄ້າມະນຸດ. ຫຼັງຈາກການຄັດເລືອກຂັ້ນທຳອິດ ແລະ ສະໜອງການປົກປ້ອງທີ່ຈຳເປັນ ແລະ ການບໍລິການຕ່າງໆ ບາງຈຳນວນອາດຈະຖືກສະເໜີວຽກໃໝ່ ເຊິ່ງເປັນວຽກທີ່ດີໃນໂຮງງານ ກ ເຊິ່ງອາດຈະຕ້ອງການແຮງງານເພີ່ມຢູ່ແລ້ວ. ການກັບຄືນເຂົ້າສູ່ສັງຄົມໂດຍອີງໃສ່ຈຸດໝາຍປາຍທາງເປັນພື້ນຖານເຊັ່ນນີ້ ຄວນຖືກພິຈາລະນາ ເປັນທາງເລືອກໜຶ່ງໃນການໃຊ້ເວລາ ແລະ ຊັບພະຍາກອນ ໃນການສົ່ງຜູ້ເຄາະຮ້າຍໄປບ່ອນພັກສະເພາະ, ສະໜັບສະໜູນເຂົາເຈົ້າໃນທີ່ນັ້ນເປັນເວລາຫຼາຍເດືອນ ຫຼື ຫຼາຍປີ ກ່ອນທີ່ຈະຈ່າຍເງິນໃນການສົ່ງເຂົາເຈົ້າກັບຄືນບ້ານ ເຊິ່ງຫຼາຍຄົນອາດຈະກັບໄປເຄື່ອນຍ້າຍແຮງງານອີກ.

## ☑ 4 ການກະຈາຍໂຄງການຊອກຫາຜູ້ເຄາະຮ້າຍແບບມີການວາງແຜນລ່ວງໜ້າ ໄປໃນເຂດທີ່ເປັນແຫຼ່ງເປົ້າໝາຍ/ ເຂດທີ່ມີຄົນກັບມາຈາກການເຄື່ອນຍ້າຍແຮງງານ ສາມາດລະບຸຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ບໍ່ໄດ້ຖືກລະບຸ ຫຼື ເຄື່ອນຍ້າຍບໍ່ເປັນທາງການ

ຜູ້ເຄາະຮ້າຍການຄ້າມະນຸດສ່ວນຫຼາຍບໍ່ໄດ້ຖືກລະບຸໃນຕອນທີ່ຢູ່ປາຍທາງ ຫຼື ລົງທະບຽນ ໃນໂຄງການກັບບ້ານ ແລະ ກັບຄືນເຂົ້າສູ່ສັງຄົມຢ່າງເປັນທາງການ. ໃນຕົວຈິງ, ພວກເຂົາເຈົ້າກັບຄືນບ້ານຢ່າງມິດງຽບ ແລະ ເອີ້ນວ່າ 'ຜູ້ທີ່ກັບຄືນບ້ານດ້ວຍຕົນເອງ'. ເຖິງຢ່າງໃດກໍຕາມ ມັນບໍ່ໄດ້ໝາຍຄວາມວ່າພວກເຂົາເຈົ້າບໍ່ຕ້ອງການຄວາມຊ່ວຍເຫຼືອ. ສ່ວນຫຼາຍແລ້ວ ແມ່ນເຂົາເຈົ້າບໍ່ຮູ້ກ່ຽວກັບການຊ່ວຍເຫຼືອທີ່ມີ ແລະ ພວກເຂົາເຈົ້າກໍຕໍ່ສູ້ດ້ວຍຕົນເອງເພື່ອແກ້ໄຂບັນຫາໃນຕອນທີ່ກັບບ້ານ. ໃນບົດຄົ້ນຄວ້າກ່ຽວກັບຄົນໄທ-ຟິລິບປິນ ຂອງອົງການແຮງງານສາກົນ, ຜູ້ທີ່ກັບຄືນບ້ານຄົນໄທຈຳນວນໜຶ່ງຕຳນິວິຈານຜູ້ສະໜອງການບໍລິການທີ່ບໍ່ກະຈາຍການບໍລິການໄປເຖິງຜູ້ທີ່ກັບຄືນບ້ານດ້ວຍຕົນເອງ ແລະ ບໍ່ໄດ້ເຮັດໃຫ້ການຊ່ວຍເຫຼືອຖືກຮັບຮູ້ໃນວົງກວ້າງ. ແມ່ຍິງບາງຈຳນວນຕໍ່ສູ້ເປັນເວລາຫຼາຍປີຫຼັງຈາກກັບຄືນບ້ານ ກ່ອນຈະຮູ້ວ່າພວກເຂົາເຈົ້າອາດຈະສາມາດຂໍຄວາມຊ່ວຍເຫຼືອໄດ້. ຜູ້ທີ່ກັບຄືນບ້ານດ້ວຍຕົນເອງຄົນໄທຄົນໜຶ່ງ ເລົ່າເຖິງປະສົບການທີ່ລຳບາກຂອງລາວດັ່ງນີ້:

> *"ຕົວແທນລັດຖະບານ ແລະ ກຸ່ມພັດທະນາທັງໝົດຕ້ອງຊອກຫາ ແລະ ຊ່ວຍແມ່ຍິງຜູ້ທີ່ຫາກໍ່ກັບບ້ານ. ເນື່ອງຈາກວ່າຖ້າຫາກແມ່ຍິງບໍ່ມີທາງເລືອກໃນຊີວິດ, ພວກເຂົາເຈົ້າອາດຈະຖືກຫຼອກລວງໂດຍພວກນາຍໜ້າໃຫ້ໄປເຄື່ອນຍ້າຍແຮງງານອີກ... ຖ້າຂ້ອຍມີຄົນຊ່ວຍຕອນທີ່ຂ້ອຍຫາກໍ່ກັບມາຈາກຍີ່ປຸ່ນ, ຖ້າຂ້ອຍມີວຽກເຮັດ (ຢູ່ບ້ານ), ຂ້ອຍຄົງບໍ່ໄປໄຕ້ຫວັນ ອີກ 2 ຄັ້ງ ແລະ ກັບບ້ານ ແລະ ພະຍາຍາມຂ້າໂຕຕາຍ..."*

ຄວນມີຄວາມພະຍາຍາມເຮັດໃຫ້ຜູ້ທີ່ກັບຄືນບ້ານຮູ້ກ່ຽວກັບທາງເລືອກການສະໜັບສະໜູນ ໃນເຂດທີ່ເປັນແຫຼ່ງເປົ້າໝາຍໃນຊຸມຊົນທ້ອງຖິ່ນ ແລະ ກະຈາຍການບໍລິການໄປເຖິງຜູ້ທີ່ກັບບ້ານທີ່ອາດຈະຍັງພົບຂໍ້ຫຍຸ້ງຍາກໃນການປັບໂຕຄືນເຂົ້າສູ່ສັງຄົມ. ຕົວຢ່າງຄວາມຕ້ອງການທີ່ຈຳເປັນໃນການຊ່ວຍເຫຼືອຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບຄືນບ້ານດ້ວຍຕົນເອງຈະແຈ້ງອອກ ໃນການສົນທະນາກຸ່ມສະເພາະ ກັບຜູ້ເຄາະຮ້າຍທີ່ກັບຄືນບ້ານຈາກຫຼາຍໆໝູ່ບ້ານໃນພາກເໜືອຂອງປະເທດໄທ. ຜູ້ເຂົ້າຮ່ວມການສົນທະນາກຸ່ມສະເພາະທັງໝົດກ່າວວ່າ ພວກເຂົາເຈົ້າແຕ່ລະຄົນລ້ວນແຕ່ຮູ້ຜູ້ເຄາະຮ້າຍທີ່ກັບຄືນບ້ານດ້ວຍຕົນເອງຫຼາຍຄົນ ທີ່ບໍ່ເຄີຍໄດ້ຮັບການສະເໜີຄວາມຊ່ວຍເຫຼືອ. ໃນການສ້າງແຜນທີ່ແບບຫຍາບໆໃນເຂດທ້ອງຖິ່ນ, ຜູ້ເຂົ້າຮ່ວມການສົນທະນາກຸ່ມສະເພາະກະຕວງວ່າມີແມ່ຍິງຫຼາຍຮ້ອຍຄົນໄດ້ກັບຄືນບ້ານດ້ວຍຕົນເອງຈາກສະຖານະການດັ່ງການຄ້າມະນຸດ ເຊິ່ງຊີ້ໃຫ້ເຫັນວ່າຈຳນວນຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ຖືກລະບຸຢ່າງເປັນທາງການ ແລະ ຖືກສະເໜີຄວາມຊ່ວຍເຫຼືອ ອາດຈະເປັນພຽງຈຳນວນໜ້ອຍດຽວທີ່ປະກົດໃຫ້ເຫັນ ສ່ວນຈຳນວນຫຼາຍແມ່ນບໍ່ເປັນທາງການ ແລະ ບໍ່ເປັນທີ່ຮັບຮູ້. ການກະຕວງນີ້ ມີຄວາມຈິງສະໜັບສະໜູນທີ່ວ່າຈຳນວນຜູ້ເຄາະຮ້າຍທີ່ໄດ້ຮັບການຊ່ວຍເຫຼືອໃນການກັບບ້ານ ແລະ ການກັບເຂົ້າສູ່ສັງຄົມ ເປັນພຽງສັດສ່ວນນ້ອຍໆຂອງຈຳນວນຄາດຄະເນຂອງຜູ້ເຄາະຮ້າຍທັງໝົດໃນລະດັບສາກົນ.[7]

---

[7] ອົງການສາກົນສຳລັບການເຄື່ອນຍ້າຍແຮງງານ (IOM) ເຊິ່ງເປັນ ໜຶ່ງໃນອົງການນຳໜ້າທີ່ເນັ້ນໃສ່ຂັ້ນຕອນການກັບບ້ານ ແລະ ການກັບຄືນເຂົ້າສູ່ສັງຄົມ ໄດ້ຊ່ວຍເຫຼືອປະມານ 15,000 ຄົນ ນັບແຕ່ປີ 1994 (www.iom.int). ໃນຂະນະທີ່ພົນສຳເລັດນີ້ບໍ່ແມ່ນ

ເພື່ອສາມາດເຂົ້າເຖິງຜູ້ທີ່ກັບຄືນບ້ານດ້ວຍຕົນເອງ ມັນມີຄວາມຈຳເປັນທີ່ຕ້ອງທົບທວນການພິຈາລະນາຍຸດທະສາດການລະບຸຜູ້ເຄາະຮ້າຍແບບເກົ່າ ແລະ ນຳໃຊ້ວິທີການທີ່ຫ້າວຫັນໃນການຊອກຫາຜູ້ເຄາະຮ້າຍ ເຊັ່ນ ຜ່ານການສ້າງຕັ້ງໜ່ວຍງານໃນຊຸມຊົນ/ ເຄືອຂ່າຍສະໜັບສະໜູນ ໃນຊຸມຊົນແຫຼ່ງເປົ້າໝາຍທີ່ມີແຮງງານເຄື່ອນຍ້າຍ ຫຼື ຜ່ານການອອກໄປຊອກຫາ ແລະ ສະໜອງການບໍລິການຕາມເສັ້ນທາງ ແລະ ຈຸດຕ່າງໆ ທີ່ຜູ້ທີ່ກັບຄືນບ້ານຜ່ານທາງ (ເຊັ່ນ ຊ່ອງທາງການສົ່ງກັບຄືນປະເທດ ແລະ ດ່ານອົບພະຍົກຕ່າງໆ). ຍຸດທະສາດທີ່ກ່ຽວກັນອີກປະການໜຶ່ງແມ່ນການເຂົ້າໄປໃນເຄືອຂ່າຍທາງສັງຄົມຂອງແຮງງານເຄື່ອນຍ້າຍ. ເປັນທີ່ຮູ້ກັນດີວ່າແຮງງານເຄື່ອນຍ້າຍອາໄສເຄືອຂ່າຍທາງສັງຄົມຫຼາຍໃນໄລຍະການອອກໄປເຄື່ອນຍ້າຍແຮງງານ ແລະ ເຄືອຂ່າຍດັ່ງກ່າວສາມາດຖືກນຳໃຊ້ໃນຂັ້ນຕອນການກັບບ້ານເຊັ່ນກັນ. ໃນຕົວຈິງ, ສະມາຊິກຂອງກຸ່ມຜູ້ຊ່ວຍເຫຼືອເພື່ອນທີ່ມີຢູ່ ສາມາດຊ່ວຍກະຈາຍຂ່າວກ່ຽວກັບການຊ່ວຍເຫຼືອທີ່ສະໜອງໃນເຂດທ້ອງຖິ່ນຂອງເຂົາເຈົ້າ ແລະ ເຊື້ອເຊີນຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ກັບຄືນບ້ານອື່ນໆ ເຂົ້າຮ່ວມປະຊຸມ ແລະ ກິດຈະກຳຕ່າງໆກ່ຽວກັບການກັບເຂົ້າສູ່ສັງຄົມ ເຊິ່ງບໍ່ດັ່ງນັ້ນພວກເຂົາເຫຼົ່ານັ້ນອາດຈະບໍ່ຖືກເຂົ້າເຖິງເລີຍ.

## ☑ 5 *ຜູ້ສະໜອງການບໍລິການຄວນມີຄວາມພ້ອມໃນການສະໜອງ ຫຼື ແນະນຳການບໍລິການອື່ນໆ ເມື່ອຜູ້ທີ່ກັບຄືນບ້ານມີຄວາມພ້ອມທີ່ຈະຮັບການຊ່ວຍເຫຼືອ*

ຜູ້ເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນທີ່ຫາກໍ່ກັບຈາກຕ່າງປະເທດ (ທັງຜູ້ທີ່ກັບຄືນບ້ານຢ່າງເປັນທາງການ ແລະ ບໍ່ເປັນທາງການ) ປະຕິເສດຄວາມຊ່ວຍເຫຼືອ ແລະ ຕ້ອງການຈັດການກັບສະຖານະການຂອງເຂົາເຈົ້າດ້ວຍຕົນເອງກ່ອນໃນຕອນທຳອິດ. ພວກເຂົາເຈົ້າຮູ້ສຶກວ່າຫຼາຍເກີນໄປ ແລະ ສົງໄສກ່ຽວກັບການຊ່ວຍເຫຼືອ ແລະ ເຊື່ອວ່າເຂົາເຈົ້າສາມາດຈັດການບັນຫາທ້າທາຍເອງໄດ້. ແມ່ຍິງຄົນໄທທີ່ກັບຄືນບ້ານຢ່າງເປັນທາງການຫຼາຍຄົນໃຫ້ສຳພາດວ່າພວກເຂົາເຈົ້າໄດ້ຮັບຂໍ້ມູນຫຼາຍ ຈາກເຈົ້າໜ້າທີ່ຕ້ານການຄ້າມະນຸດໃນຕອນທີ່ກັບຄືນບ້ານ, ແຕ່ບາງຄັ້ງຂໍ້ມູນກໍຫຼາຍເກີນໄປໃນຕອນທີ່ຫາກໍ່ກັບມາໃໝ່ໆ. ແມ່ຍິງຄົນໜຶ່ງກ່າວວ່າຫຼັງຈາກການເດີນທາງຫຼາຍຊົ່ວໂມງ ລາວພຽງຕ້ອງການຢາກເມືອເຮືອນໃຫ້ໄວທີ່ສຸດ ລາວເລີຍບໍ່ໄດ້ໃສ່ໃຈຟັງເຈົ້າໜ້າທີ່ປານໃດໃນຕອນທີ່ຢູ່ສະໜາມບິນ. ຄົນໄທທີ່ກັບຄືນບ້ານອີກຄົນໜຶ່ງກ່າວວ່າລາວບໍ່ຈື່ຊື່ຂອງເຈົ້າໜ້າທີ່ ທີ່ລາວພົບຕອນຢູ່ສະໜາມບິນ ຫຼື ພາກສ່ວນໃດທີ່ເຂົາເຈົ້າເຮັດວຽກນຳ ຫຼື ສິ່ງທີ່ເຂົາເຈົ້າບອກລາວ.

---

ຜົນສຳເລັດທີ່ນ້ອຍ ແຕ່ມັນເປັນພຽງປະມານ 0.15% ຂອງຈຳນວນຜູ້ເຄາະຮ້າຍທີ່ຄາດຄະເນໂດຍກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ (ຄິດໄລ່ໂດຍອີງໃສ່ຈຳນວນຄາດຄະເນ 700,000 ຄົນ ທີ່ຖືກຄ້າມະນຸດທຸກໆປີເປັນເວລາ 14 ປີ) ແລະ ປະມານ 0.6% ຂອງຈຳນວນຄາດຄະເນທີ່ນຳໃຊ້ໂດຍອົງການແຮງງານສາກົນ. ການຄິດໄລ່ທີ່ອີງໃສ່ການຄາດຄະເນເຊັ່ນນີ້ໂດຍທົ່ວໄປແລ້ວແມ່ນເປັນພຽງແຕ່ການຊີ້ບອກ ແລະ ຕົວເລກລະຫວ່າງພາກພື້ນ ແລະ ປະເທດແມ່ນມີຄວາມແຕກຕ່າງກັນຫຼາຍ. ເຖິງຢ່າງໃດກໍຕາມ, ການຄົ້ນຄວ້າລະດັບພາກພື້ນສະແດງຜົນໄປໃນທາງດຽວກັນ. ການສຶກສາຂອງການຄ້າມະນຸດໃນທະວີບເອີຣົບຕາເວັນອອກສຽງໃຕ້ ໄດ້ສະຫຼຸບວ່າຄວາມຊ່ວຍເຫຼືອໃນການກັບຄືນເຂົ້າສູ່ສັງຄົມໄດ້ຖືກສະໜອງໃຫ້ພຽງແຕ່ປະມານ 7% ຂອງແມ່ຍິງ ແລະ ເດັກນ້ອຍ ທີ່ຖືກຄ້າມະນຸດ (UNICEF, UNOHCHR, OSCEODIHR, 2002).

ເຖິງຢ່າງໃດກໍຕາມ, ຫຼັງຈາກຫຼາຍເດືອນທີ່ກັບມາຢູ່ບ້ານ, ຜູ້ທີ່ກັບຄືນບ້ານຫຼາຍຄົນຮັບຮູ້ເຖິງຄວາມຫຍຸ້ງຍາກໃນການກັບຄືນບ້ານ. ເງິນທ້ອນ (ຖ້າເຂົາເຈົ້າມີ) ອາດຈະຖືກໃຊ້ໝົດ, ຖານະທາງສັງຄົມໃນຄອບຄົວ ແລະ ຊຸມຊົນອາດຈະປ່ຽນໄປ, ພວກເຂົາເຈົ້າຮັບຮູ້ວ່າບໍ່ສາມາດຫາເງິນທີ່ຈຳເປັນສຳລັບຕົນເອງ ແລະ ຄອບຄົວ ແລະ ເຂົາເຈົ້າອາດຈະຮູ້ສຶກຜິດ ຫຼື ຖືກຈຳກັດໃນຊຸມຊົນເທົ່ານັ້ນ. ມາເຖິງຕອນນີ້, ຫຼາຍຄົນຈະເລີ່ມຊອກຫາທາງເລືອກອື່ນ, ລວມທັງການກັບໄປເຄື່ອນຍ້າຍແຮງງານອີກ ໂດຍຜ່ານຊ່ອງທາງທີ່ບໍ່ປົກກະຕິ ຫຼື ຂະແໜງວຽກ (ສ່ວນຫຼາຍແມ່ນບໍ່ເປັນທາງການ) ເຊິ່ງແມ່ນບ່ອນທີ່ເຂົາເຈົ້າເຄີຍຖືກເອົາປຽບມາກ່ອນ. ເວົ້າອີກຢ່າງໜຶ່ງແມ່ນມີຄວາມເປັນໄປໄດ້ສູງທີ່ເຂົາເຈົ້າຈະຖືກຄ້າມະນຸດອີກ. ເຖິງຢ່າງໃດກໍ່ຕາມ, ເມື່ອເຂົາເຈົ້າປະສົບບັນຫາຫຍຸ້ງຍາກ ແລະ ເລີ່ມພິຈາລະນາທາງເລືອກຕ່າງໆ, ເຂົາເຈົ້າກໍອາດຈະຢູ່ໃນໄລຍະທີ່ເປີດກວ້າງທີ່ຈະຮັບເອົາການຊ່ວຍເຫຼືອ ຫຼື ອາດຈະກຳລັງຊອກຫາການຊ່ວຍເຫຼືອຢູ່. ຜູ້ທີ່ເຄີຍປະຕິເສດການຊ່ວຍເຫຼືອໃນຕອນທຳອິດ ມາເຖິງຈຸດນີ້ ກໍອາດຈະພ້ອມ ແລະ ຢາກເຂົ້າຮ່ວມໃນໂຄງການກັບຄືນເຂົ້າສູ່ສັງຄົມ. ເພື່ອລະບຸແມ່ຍິງທີ່ກັບຄືນບ້ານທີ່ອາດຈະຕ້ອງການຄວາມຊ່ວຍເຫຼືອ ແມ່ນເປັນການດີທີ່ເລີ່ມພະຍາຍາມຕິດຕໍ່ເຂົາເຈົ້າໃນຕອນທີ່ກຳລັງກັບມາບ້ານ. ເຖິງຢ່າງໃດກໍຕາມ, ເນື່ອງຈາກຄວາມເມື່ອຍທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ຄວາມກັງວົນຕ່າງໆ ບໍ່ຮູ້ວ່າຈະມີວຽກເຮັດ ຫຼື ບໍ່ ທີ່ເຂົາເຈົ້າປະສົບໃນໄລຍະການກັບບ້ານ, ເຂົາເຈົ້າອາດຈະບໍ່ມີການກຽມພ້ອມທີ່ຈະພິຈາລະນາການຊ່ວຍເຫຼືອທຸກຮູບການ ທີ່ຖືກສະເໜີໃຫ້ໃນການຕິດຕໍ່ຄັ້ງທຳອິດ. ຄວາມທ້າທາຍແມ່ນການທີ່ຕິດຕໍ່ເຂົາເຈົ້າໂດຍບໍ່ໃຫ້ຮູ້ສຶກວ່າຫຼາຍເກີນໄປ ແຕ່ບອກໃຫ້ເຂົາເຈົ້າຮູ້ວິທີຂໍຄວາມຊ່ວຍເຫຼືອເມື່ອເຂົາເຈົ້າມີຄວາມພ້ອມທີ່ຈະຮັບ.





***ການຝຶກອົບຮົມຕົວຈິງໃນວຽກຈິງ.*** *ຜູ້ເຄາະຮ້າຍຈາກການຄ້າມະນຸດຄົນໄທ, ກັບຄືນບ້ານດ້ວຍຕົນເອງຈາກການຄ້າມະນຸດໃນສະຖານທີ່ນອກທະວີບອາຊີຕາເວັນອອກສຽງໃຕ້ ເຊັ່ນ ຍີ່ປຸ່ນ ແລະ ຕາເວັນອອກກາງ, ໄດ້ຮັບການຝຶກອົບຮົມໃນວຽກຕົວຈິງ (ຮູບເທິງ) ແລະ ໂອກາດໃນການເຮັດວຽກ (ຮູບລຸ່ມ) ໃນຮ້ານອາຫານ ທີ່ມີຊື່ສຽງໃນພາກເໜືອຂອງປະເທດໄທ. ການຝຶກອົບຮົມ ແລະ ການຊ່ວຍເຫຼືອໃນການຊອກວຽກສະໜອງໂດຍອົງການທີ່ບໍ່ແມ່ນລັດຖະບານ SEPOM ໃນທ້ອງຖິ່ນ, ໂດຍມີການສະໜັບສະໜູນຈາກອົງການແຮງງານສາກົນ.*

*ຮູບໂດຍ: ແອນເດີສ ລິດສບອກ.*

***ກ່ຽວກັບຜູ້ຂຽນ:*** *ແອນເດີສ ລິດສບອກ ໄດ້ເຮັດວຽກກ່ຽວກັບການຕໍ່ຕ້ານການຄ້າມະນຸດ ແລະ ບັນຫາການເຄື່ອນຍ້າຍແຮງງານ ໃນເອີຣົບ ແລະ ອາຊີ ເປັນເວລາຫຼາຍກວ່າ 10 ປີ ແລະ ແມ່ນອະດີດຫົວໜ້າໂຄງການ ການກັບບ້ານ ແລະ ການກັບຄືນເຂົ້າສູ່ສັງຄົມຂອງອົງການແຮງງານສາກົນ ປະຈຳບາງກອກ, ປະເທດໄທ.*

---

SIREN@undp.org | www.notrafficking.org

UNIAP
UNITED NATIONS INTER-AGENCY
PROJECT ON HUMAN TRAFFICKING